ສຸວັນນີ ໂຮມເຊັ້ນເຕີ ມອບເງິນພັນທະອາກອນ 114 ຕື້ກີບ ປະຈຳປີ 2024

Souvanny Home Center Contributes 114 Billion LAK in Taxes for 2024

ວັນຈັນ ທີ 10 ກຸມພາ 2025, ທີ່ນະຄອນຫຼວງວຽງຈັນ - ບໍລິສັດ ສຸວັນນີ ໂຮມເຊັ້ນເຕີ ມະຫາຊົນ ຜູ້ຈຳໜ່າຍສິນຄ້າວັດສະດຸກໍ່ສ້າງ ແລະ ເຄື່ອງຕົກແຕ່ງເຮືອນ ໂດຍໃນປີ 2024 ມີການມອບພາສີ-ອາກອນ ມູນຄ່າ **114,117,000,000 ກີບ (114 ຕື້ກີບ)** ເພີ່ມຂຶ້ນຈາກປີ 2023 ຄິດເປັນ 67.33 ສ່ວນຮ້ອຍ ໃຫ້ແກ່ລັດຖະບານ ເພື່ອເປັນສ່ວນໜຶ່ງຂອງການໃນການພັດທະນາປະເທດຊາດ. ນອກຈາກການມອບພັນທະອາກອນໂດຍກົງແກ່ພາກລັດແລ້ວ, ຄວບຄູ່ກັນນັ້ນບໍລິສັດຍັງໃຫ້ຄວາມສຳຄັນກັບການຕອບແທນສັງຄົມຜ່ານໂຄງການ “ສ້າງຮອຍຍິ້ມດ້ວຍການແບ່ງປັນ” ທີ່ດຳເນີນມາຕັ້ງແຕ່ປີ 2015 ເປັນໄລຍະເວລາເກືອບ 10 ປີ ເພາະພວກເຮົາເຊື່ອວ່າ: ການດຳເນີນທຸລະກິດທີ່ດີຕ້ອງຄຽງຄູ່ໄປກັບການສ້າງປະໂຫຍດໃຫ້ກັບສັງຄົມ, ສ້າງສັງຄົມແຫ່ງຈິດອາສາ ແລະ ການໃຫ້ ເປັນການພັດທະນາສັງຄົມ-ສິ່ງແວດລ້ອມ ແລະ ບັນດາບ້ານອ້ອມຂ້າງໃນດ້ານຕ່າງໆ ໃຫ້ດີຂຶ້ນແບບຍືນຍົງ.

Vientiane, Lao PDR – February 10, 2025 – Souvanny Home Center Public Company, a leading retailer of construction materials and home furnishings, has announced its significant contribution to the Lao government in the form of taxes and duties. In 2024, the company paid **114,117,000,000 LAK (114 billion LAK),** a 67.33 percent increase from 2023. This substantial contribution underscores the company's commitment to national development. In addition to its direct tax contributions, Souvanny Home Center is dedicated to giving back to the community through its " SHARING BRINGS SMILE" project. This initiative, which began in 2015, has been running for nearly a decade. The company firmly believes that good business practices go hand in hand with creating benefits for society, fostering a culture of volunteerism and giving. These efforts contribute to the sustainable development of communities, the environment, and surrounding villages in various aspects.



ການມອບອາກອນໃນຄັ້ງນີ້ເປັນການປະກອບສ່ວນອັນສຳຄັນຂອງລູກຄ້າທຸກທ່ານ ທີ່ມາໃຊ້ບໍລິການຂອງ ບໍລິສັດ ສຸວັນນີ ໂຮມເຊັນເຕີ ທຸກທ່ານຖືວ່າເປັນຜູ້ມີສ່ວນຮ່ວມຢ່າງໃຫຍ່ຫຼວງໃນການສະໜັບສະໜຸນການ ພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດບໍ່ວ່າຈະເປັນ ການລົງທຶນໃນການສ້າງພື້ນຖານໂຄງລ່າງ, ການ ພັດທະນາການສຶກສາ, ດ້ານສາທາລະນະສຸກ ແລະ ສະຫວັດດີການສັງຄົມ ເພື່ອຍົກລະດັບຄຸນນະພາບຊີວິດຂອງ ປະຊາຊົນໂດຍລວມ.

This tax contribution is a significant contribution from all customers who use the services of Souvanny Home Center. Every customer is considered a major participant in supporting the socio-economic development of the nation, whether through investments in infrastructure development, educational development, public health, and social welfare to improve the overall quality of life for the people.

ສຸວັນນີ ໂຮມເຊັນເຕີ ມີເປົ້າໝາຍການຂະຫຍາຍສາຂາເພີ່ມອີກ 1 ສາຂາ ໃນປີ 2025 ເປັນສາຂາທີ 9 ທີ່ມີ ຄວາມທັນສະໄໝ ຕັ້ງຢູ່ ບ້ານສົມສະໜຸກ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ເຊິ່ງຄາດວ່າຈະເປັນການນຳ ໄປສູ່ການຂະຫຍາຍການບໍລິການເພື່ອຮອງຮັບຄວາມຕ້ອງການຂອງລູກຄ້າໃຫ້ສະດວກສະບາຍຍິ່ງຂຶ້ນ ໂດຍສາຂາ ດັ່ງກ່າວນີ້ ອາດຈະເປັນອີກໜຶ່ງຊ່ອງທາງຂອງການເຕີບໂຕຂອງບໍລິສັດ ທີ່ຈະສ້າງລາຍຮັບອັນສະທ້ອນໄປເຖິງການຊຳ ລະພາສີ-ອາກອນທີ່ປ່ຽນແປງໃນປີຖັດໄປ.

Souvanny Home Center aims to expand its branches by one more branch in 2025, becoming the 9th branch, which will be modern and located in Somsanook Village, Hadxaifong district, Vientiane Capital. This expansion is expected to lead to improved service delivery to better meet customer needs. The new branch may also be another channel for the company's growth, generating revenue that will be reflected in tax payments in the following year.

